# ທົດສະດີ

# ການເມືອງ - ການປົກຄອງ

**ວາລະສານຄົ້ນຄວ້າຂອງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ**




- ເພີ່ມທະວີການເຄົາລົບ ແລະປະຕິບັດລັດຖະທຳມະນູນ ແລະກົດໝາຍ ຢູ່ສປປ ລາວ ໃຫ້ເຂັ້ມງວດ.
- ໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບວຽກງານກວດກາເຂົ້າໃນພຶດຕິກຳຕົວຈິງຂອງປະເທດເຮົາໃນປັດຈຸບັນ.
- ແນວຄິດ ໄກສອນ ພົມວິຫານ ກ່ຽວກັບການຄຸ້ມຄອງເສດຖະກິດ ຂອງລັດ ຢູ່ປະເທດເຮົາ.


ປີທີ 27
ສະບັບທີ 221
ປະຈຳເດືອນ 11
ປີ 2023

# ສາລະບານ

ນ. ພຸດສະດາພອນ ພົມມະວົງສາ: ເພີ່ມທະວີການເຄົາລົບ ແລະປະຕິບັດລັດຖະທຳມະນູນ ແລະກົດໝາຍ ຢູ່ສປປ ລາວ ໃຫ້ເຂັ້ມງວດ........................................................ 1

ນ. ດາລຸນນີ ແກ້ວມະນີວົງ: ໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບວຽກງານກວດກາເຂົ້າໃນພຶດຕິກຳຕົວຈິງ ຂອງປະເທດເຮົາໃນປັດຈຸບັນ................................ 8

ສະຫວ່າງ ຊາມຸນຕີ: ແນວຄິດໄກສອນ ພົມວິຫານ ກ່ຽວກັບການຄຸ້ມຄອງເສດຖະກິດ ຂອງລັດ ຢູ່ປະເທດເຮົາ.......... 14

ຄຳໝັ້ນ ຟອງມະນີ: ຍົກສູງການນຳພາ ຂອງຄະນະພັກຮາກຖານພະແນກແຮງງານ ແລະສະຫວັດດີການສັງຄົມຕໍ່ກັບສູນເຝິກອົບຮົມສີມືແຮງງານ ຢູ່ແຂວງອຸດົມໄຊ................ 19

ສີພັນ ພົມມະນີ: ດຶງດູດການລົງທຶນຂອງຕ່າງປະເທດ ເຂົ້າໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນ ຢູ່ເມືອງຂວາ ແຂວງຜົ້ງສາລີ..................................................... 24

ແກ້ວ ຈັນທິກຸນ: ເພີ່ມທະວີວຽກງານຕິດຕາມ, ກວດກາພັກ-ລັດ ຢູ່ແຂວງຫຼວງນ້ຳທາ ໃຫ້ໜັກແໜ້ນ, ເຂັ້ມແຂງເທື່ອລະກ້າວ 31

ສອນແພງ ຢູລີໄຊ: ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ເມືອງງາ ແຂວງອຸດົມໄຊ......................... 39

ແກ້ວວິໄລ ໄຊຍະວົງສາ: ບາງຜົນສຳເລັດໃນການສ້າງແຜນກຳນົດພະນັກງານ ນຳພາ-ຄຸ້ມຄອງຂອງອົງຄະນະພັກເມືອງ-ນະຄອນໃນທົ່ວ ແຂວງສະຫວັນນະເຂດ........................... 48

ສັງທະຂານ ເຫຼົາສະດິດ: ຍົກສູງຄຸນນະພາບການສ້າງຊັບພະຍາກອນມະນຸດ ຢູ່ແຂວງວຽງຈັນ ໃຫ້ມີຄວາມເຂັ້ມແຂງ (ຕໍ່ຈາກສະບັບເດືອນ 10/2023)............................... 55

ທອງແກ້ວ ສິດທິພົງ: ຍົກສູງຄຸນທາດການເມືອງຂອງຖັນແຖວພະນັກງານ ຢູ່ແຂວງຫຼວງນ້ຳທາ.......................... 60

**ຜູ້ຊີ້ນຳ**

ປທ. ນ. ບຸນມີ ຈຸນລະຈັກ

**ຄະນະບັນນາທິການ**

ປອ. ດາວສະຫວັນ ເຄືອມີໄຊ

ປອ. ຄຳມອນ ຈັນທະຈິດ

ປທ. ນ. ວະໄລລັກ ອະໄພ

**ກອງບັນນາທິການ**

ປທ. ສະນຸກສິນ ໂກສີພັນ

ນ. ພູວຽງ ແກ້ວສີມີໄຊ

ນ. ດອກໄມ້ ຈັນດາລາ

**ກອງເລຂາ**

ນ. ພູວຽງ ແກ້ວສີມີໄຊ

**ຈັດໜ້າ**

ລຳພູນ ຖຸນໄຊຍາ

**ຈຳໜ່າຍ**

ນ. ດອກໄມ້ ຈັນດາລາ

ພຸດທະພອນ ລິນອຸໄທ

**ຮູບພາບ**

ຕາອ໊ອດ ແສນທະວີສຸກ

**ແປສາລະບານ**

ລຳພູນ ຖຸນໄຊຍາ

**ຮູບພາບໜ້າປົກ**

ພິທີເປີດຊຸດເຝິກອົບຮົມທິດສະດີການເມືອງ-ການປົກຄອງຕາມຫົວຂໍ້ສະເພາະ ໃຫ້ເລຂາພັກເມືອງ ແລະຄະນະປະຈຳພັກເມືອງຂອບເຂດທົ່ວປະເທດ ຊຸດທີ VI ລະຫວ່າງ ວັນທີ 13-24 ພະຈິກ 2023

**ສຳນັກງານ**

ສູນຂໍ້ມູນຂ່າວສານ ສະຖາບັນການເມືອງແລະການປົກຄອງແຫ່ງຊາດ ບ້ານທ່າງ່ອນ ເມືອງໄຊທານີ ນະຄອນຫຼວງວຽງຈັນ

ໂທລະສັບ/ແຟັກ: 021 752352

020 29994161

ອີເມລ: Valasan.nappa@yahoo.com

ເວບໄຊ: www.nappa.gov.la

# ໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບ ວຽກງານກວດກາເຂົ້າໃນພຶດຕິກຳຕົວຈິງ ຂອງປະເທດເຮົາ ໃນປັດຈຸບັນ

ນ. ດາລຸນນີ ແກ້ວມະນີວົງ

ວຽກງານຕິດຕາມ, ກວດກາແມ່ນວຽກງານໜຶ່ງໃນພາລະບົດບາດການນຳພາ ຂອງພັກ, ແມ່ນໜ້າທີ່ຄວາມຮັບຜິດຊອບໂດຍກົງຂອງຄະນະພັກຂັ້ນຕ່າງໆ, ແມ່ນການປະຕິບັດບົດບາດການນຳພາລວມຂອງຄະນະພັກ, ທັງແມ່ນການປະກອບສ່ວນສະກັດກັ້ນ, ຕ້ານ ແລະຕິຖອຍປາກົດການອາດຍາສິດ, ສໍ້ລາດບັງຫຼວງ, ການຟຸມເຟືອຍ... ຕາມທັດສະນະຂອງປະທານ ໄກສອນ ພົມວິຫານ ວຽກງານກວດກາແມ່ນ: "ສ່ວນປະກອບທີ່ສຳຄັນອັນໜຶ່ງ ແລະເປັນໜຶ່ງໃນບັນດາບົດບາດຕົ້ນຕໍແຫ່ງການນຳພາຂອງພັກ, ເລນິນ ເວົ້າວ່າ: "ບໍ່ມີການກວດກາກໍບໍ່ມີການນຳພາ", ຈຸດປະສົງຂອງການກວດກາແມ່ນແນໃສ່ຊອກໃຫ້ເຫັນທັງດ້ານດີ, ດ້ານຕັ້ງໜ້າເພື່ອຊຸກຍູ້, ສົ່ງເສີມໃຫ້ຂະຫຍາຍກວ້າງອອກໄປເລື້ອຍໆ, ທັງຊອກໃຫ້ເຫັນດ້ານຫຍໍ້ທໍ້, ຜິດພາດ ເພື່ອມີມາດຕະການກຳຈັດ, ແກ້ໄຂ, ເຮັດໃຫ້ແຜນນະໂຍບາຍຂອງພັກ ແລະລັດ ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ, ທັງເຮັດໃຫ້ຖັນແຖວພະນັກງານ, ສະມາຊິກພັກມີຄວາມປອດໄສ" [1]. ແລະເພິ່ນຍັງໄດ້ໃຫ້ທັດສະນະກ່ຽວກັບວຽກງານກວດກາອີກວ່າ: "ວຽກງານກວດກາແມ່ນຫຼັກການສຳຄັນ, ແມ່ນສ່ວນປະກອບທີ່ຕັດແຍກບໍ່ໄດ້ ແລະເປັນໜຶ່ງໃນບັນດາພາລະບົດບາດຕົ້ນຕໍ ແຫ່ງການນຳພາຂອງພັກ, ການກວດກາການເຄື່ອນໄຫວ ຂອງອົງການພັກ, ອົງການລັດ, ກະທັ້ງເຖິງພະນັກງານສະມາຊິກພັກຂັ້ນຕ່າງໆ ທັງແມ່ນຄວາມຈຳເປັນ ແລະທັງແມ່ນເງື່ອນໄຂເພື່ອປະຕິບັດບັນດາໜ້າທີ່ແຫ່ງການສ້າງແລະຂະຫຍາຍລະບອບປະຊາທິປະໄຕປະຊາຊົນໃຫ້ໄດ້ຮັບຜົນ" [2]. ຈາກທັດສະນະດັ່ງກ່າວສາມາດຊີ້ໃຫ້ເຫັນວ່າ ການກວດກາແມ່ນເພື່ອສະກັດກັ້ນ ແລະຕ້ານການທັບປຸ້ນໂດຍສັນຕິຂອງສັດຕູ ແລະກຸ່ມຄົນບໍ່ຫວັງດີຕ້ານພະຍາດອາດຍາສິດ ແລະການສໍ້ລາດບັງຫຼວງ ເພາະພະຍາດດັ່ງກ່າວ "ແມ່ນພຶດຕິກຳຂອງພະນັກງານທີ່ສວຍໃຊ້ສິດອຳນາດ, ຖານະຕຳແໜ່ງ, ແລະໜ້າທີ່ຂອງຕົນເພື່ອຍັກຍອກ, ສໍ້ໂກງ, ຮັບສິນບົນ, ທີ່ໃຫ້ສິນບົນ ແລະພຶດຕິກຳອື່ນໆ" [3], ລວມທັງການເຮັດຜິດກົດໝາຍໂດຍເຈດຕະນາ ເພື່ອຫາຜົນປະໂຫຍດສ່ວນຕົວ ເຊິ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ, ຜົນປະໂຫຍດ

[1] ບົດຄວາມເຫັນຂອງປະທານໄກສອນ ພົມວິຫານ ຕໍ່ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 7, ວັນທີ 17 ທັນວາ ປີ 1991.

[2] ໄກສອນ ພົມວິຫານ ນິພົນເລືອກເຟັ້ນເຫຼັ້ມ IV, ປີ 2005, ໜ້າ 426-427.

[3] ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ) ປີ 2014, ໜ້າ 2.

ຂອງພົນລະເມືອງ.

ປະທານ ໄກສອນ ພົມວິຫານ ຍາມໃດກໍເນັ້ນໜັກ ແລະໃຫ້ທິດຊີ້ນຳຢ່າງແທດເຖິງຕໍ່ກັບວຽກງານກວດກາ ເພິ່ນເວົ້າວ່າ: "ຕ້ອງເພີ່ມທະວີວຽກງານກວດກາ, ຊອກໃຫ້ເຫັນປັດໄຈໃໝ່ ເພື່ອຖອດຖອນບົດຮຽນ ສໍາລັບຊີ້ນໍາຂະບວນການລວມ ແລະປຸກລະດົມບ່ອນອື່ນໆ ໃຫ້ປະຕິບັດຕາມ, ແກ້ໄຂດັດແປງຂໍ້ຂາດຕົກບົກຜ່ອງ ແລະຄວາມຜິດເຂວຕ່າງໆ ໃນການປະຕິບັດກົນໄກຄຸ້ມຄອງໃໝ່ໃຫ້ໄດ້ຢ່າງທັນການ"(1). ປະທານ ໄກສອນ ພົມວິຫານ ໄດ້ຍົກໃຫ້ເຫັນວ່າວຽກງານກວດກາ ແມ່ນໜ້າທີ່ຂອງຄະນະພັກທຸກຂັ້ນ, ຂອງທຸກອົງການຈັດຕັ້ງມະຫາຊົນ, ເພິ່ນໄດ້ເວົ້າວ່າ: "ການກວດກາມັນບໍ່ແມ່ນມາດຕະການພິເສດ, ຊົ່ວຄາວໃດໜຶ່ງ ແລະກໍບໍ່ແມ່ນວຽກງານຂອງພຽງແຕ່ບັນດາອົງການກວດກາສະເພາະເທົ່ານັ້ນ, ແຕ່ກົງກັນຂ້າມ ມັນພັດແມ່ນສ່ວນປະກອບອັນຈໍາເປັນຂອງວຽກງານຈັດຕັ້ງ ຂອງກົງຈັກຂອງພັກ, ຂອງກົງຈັກຂອງລັດ ແລະຂອງບັນດາການຈັດຕັ້ງມະຫາຊົນທຸກຂັ້ນ ກໍຄືຂອງພະນັກງານການນໍາຂັ້ນຕ່າງໆແຕ່ລະຄົນ"(2). ສະນັ້ນ, ລັກສະນະຂອງການກວດກາຕ້ອງຕົວຈິງ, ຕ້ອງເຮັດຢ່າງເປັນປະຈໍາ, ມີຈຸດສຸມ ແລະມີປະສິດທິຜົນ, ກວດກາຕ້ອງໃຫ້ມີຜົນ, ແຈ້ງຜົນຂອງການກວດກາໃຫ້ພະນັກງານ, ສະມາຊິກພັກ ແລະປະຊາຊົນຮູ້ (ຜົນທີ່ສໍາຄັນ). ການກວດກາຕ້ອງມີລັກສະນະຮອບດ້ານ, ສົບທົບຢ່າງກົມກຽວການກວດກາຂອງພັກ, ຂອງລັດ ຕາມສາຍຕັ້ງ ແລະສາຍຂວາງ ແລະການກວດກາຂອງມະຫາຊົນ "ມີການກວດກາ ຈຶ່ງຊ່ວຍໃຫ້ການນໍາກໍາແໜ້ນວິວັດການ ແລະຜົນໄດ້ຮັບຂອງການຈັດຕັ້ງປະຕິບັດເພື່ອຍ້ອງຍໍ, ຊົມເຊີຍ, ປຸກລະດົມດ້ານດີ, ເຜີຍແຜ່ບົດຮຽນທີ່ດີ, ແກ້ໄຂບັນດາຂໍ້ຫຍຸ້ງຍາກ, ອຸປະສັກ, ດັດແກ້ ແລະສະກັດກັ້ນຂໍ້ຂາດຕົກບົດພ່ອງ, ຜິດເຂວຢ່າງທັນການ, ຮັບປະກັນໃຫ້ແຜນນະໂຍບາຍ, ມະຕິຕົກລົງທີ່ວາງອອກນັ້ນ ໄດ້ຮັບການປະຕິບັດຢ່າງມີໄຊ"(3). ປະທານ ໄກສອນ ພົມວິຫານ ຍາມໃດກໍເອົາໃຈໃສ່ຢ່າງຈິດຈໍ່ຕໍ່ວຽກງານຕິດຕາມ, ກວດກາ, ເພິ່ນຖືວ່າວຽກງານກວດກາ ແມ່ນພາກສ່ວນໜຶ່ງທີ່ສໍາຄັນຍິ່ງ, ເປັນພື້ນຖານທີ່ສອດຫ້ອຍໃນທຸກຂົງເຂດວຽກງານ ເພື່ອຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເພິ່ນເວົ້າວ່າ: "ຕ້ອງເພີ່ມທະວີວຽກງານກວດກາ, ກວດກາເພື່ອເສີມຂະຫຍາຍອັນດີ, ດັດແປງແກ້ໄຂອັນອ່ອນຢ່າງທັນເວລາ, ຕ້ອງປະຕິບັດການກວດກາແຕ່ເທິງລົງລຸ່ມ, ແຕ່ລຸ່ມຂຶ້ນເທິງ, ເມື່ອກວດກາແລ້ວໆຕ້ອງມີຂໍ້ສະຫຼຸບ, ມີມາດຕະການແກ້ໄຂ"(4).

ໃນໄລຍະຜ່ານມາ ພັກ-ລັດເຮົາໄດ້ໝູນ

(1) ໄກສອນ ພົມວິຫານ ອອກແຮງແຂ່ງຂັນກັນປະຕິບັດແຜນການແຫ່ງລັດປີ 1985 ໃຫ້ສໍາເລັດຜົນຢ່າງສະຫງ່າງາມ, ປີ 1985, ໜ້າ 42.

(2) ບົດຄວາມເຫັນຂອງປະທານ ໄກສອນ ພົມວິຫານ ປະກອບໃສ່ປຶ້ມ ຄູ່ມືກ່ຽວກັບວຽກງານກວດກາພັກ ແລະລັດ, ໜ້າ 3.

(3) ບົດຄວາມເຫັນຂອງປະທານ ໄກສອນ ພົມວິຫານ ວ່າດ້ວຍຂໍ້ກໍານົດການເຮັດວຽກຂອງກົມການເມືອງ, ຄະນະເລຂາທິການສູນກາງ ແລະຄະນະປະຈໍາສະພາລັດຖະມົນຕີ, ປີ 1987, ໜ້າ 27.

(4) ໄກສອນ ພົມວິຫານ ດັດແປງໃໝ່ຢ່າງຮອບດ້ານ ຍາດເອົາໄຊຊະນະໃໝ່ ໃນການປະຕິບັດສອງໜ້າທີ່ ຍຸດທະສາດ, ປີ 1988, ໜ້າ 140.

ໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບວຽກງານກວດກາຢ່າງປະດິດສ້າງ, ໄດ້ໃຫ້ຄວາມສຳຄັນ ແລະເອົາໃຈໃສ່ຕໍ່ກັບວຽກງານກວດກາໂດຍຖືເອົາວຽກງານຕິດຕາມກວດກາເປັນວຽກໜຶ່ງທີ່ຂາດບໍ່ໄດ້ໃນການເຄື່ອນໄຫວ-ນຳພາຂອງບັນດາການຈັດຕັ້ງພັກ ແລະການຄຸ້ມຄອງບໍລິຫານຂອງບັນດາການຈັດຕັ້ງລັດ. ຍ້ອນແນວນັ້ນ, ບໍ່ວ່າໃນສະພາບເງື່ອນໄຂໃດພັກລັດເຮົາໄດ້ເອົາໃຈໃສ່ຕໍ່ວຽກງານຄົ້ນຄວ້າ ແລະອອກນິຕິກຳຕ່າງໆເພື່ອແນໃສ່ຊີ້ນຳການປັບປຸງບູລະນະວຽກງານດັ່ງກ່າວໃຫ້ມີຄວາມເຂັ້ມແຂງ, ເຄື່ອນໄຫວຢ່າງມີປະສິດທິຜົນສູງ. ກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວໄດ້ເນັ້ນໜັກວ່າ: “ເມື່ອກວດກາເຫັນບັນຫາແລ້ວຕ້ອງແກ້ໄຂຢ່າງຂາດຕົວ, ບໍ່ປະໃຫ້ບັນຫາແກ່ຍາວໄປ, ບັນຫາເກີດຂຶ້ນຢູ່ໃສແມ່ນຄະນະພັກຢູ່ບ່ອນນັ້ນ ຕ້ອງເປັນເຈົ້າການ ແລະເປັນເອກະພາບກັນແກ້ໄຂ ໂດຍເອົາການສຶກສາອົບຮົມເປັນພື້ນຖານ ແລະເອົາກົດໝາຍເປັນສິ່ງຄ້ຳປະກັນ, ອັນໃດເກີນຂອບເຂດສິດຕັດສິນຂອງຕົນເອງຕ້ອງນຳສະເໜີຂັ້ນເທິງໂດຍໄວ”(1); ກົດລະບຽບຂອງພັກປະຊາຊົນປະຕິວັດລາວ ສະໄໝທີ X ໝວດທີ X ມາດຕາ 44 ໄດ້ກຳນົດລະອຽດກ່ຽວກັບວຽກງານຕິດຕາມກວດກາຂອງພັກວ່າ: “ວຽກງານຕິດຕາມກວດກາພັກ ແມ່ນໜຶ່ງໃນບົດບາດການນຳພາຂອງພັກ, ຄະນະພັກເປັນຜູ້ຊີ້ນຳໂດຍກົງ ຕໍ່ວຽກງານຕິດຕາມ, ກວດກາ; ມີຄວາມຮັບຜິດຊອບຕໍ່ການນຳພາປະຕິບັດວຽກງານຕິດຕາມ, ກວດກາ, ຕ້ານການສໍ້ລາດບັງຫຼວງ ແລະແກ້ໄຂຜົນຂອງການກວດກາ; ການຈັດຕັ້ງພັກທຸກຂັ້ນ ແລະສະມາຊິກພັກທຸກສະຫາຍຕ້ອງຢູ່ພາຍໃຕ້ການຕິດຕາມກວດກາຂອງພັກ, ຕ້ອງດຳເນີນການຕິດຕາມກວດກາຕໍ່ການຈັດຕັ້ງພັກ ແລະສະມາຊິກພັກທີ່ຢູ່ພາຍໃຕ້ສິດຄຸ້ມຄອງຂອງຕົນໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບພັກ, ກົດໝາຍ ແລະລະບຽບຫຼັກການຂອງລັດ”(2) ແລະໃນກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກຍັງໄດ້ເນັ້ນໜັກວ່າ: “ເພີ່ມທະວີການຕິດຕາມ, ກວດກາ ແລະເດັດດ່ຽວແກ້ໄຂປາກົດການຫຍໍ້ທໍ້ຢູ່ພາຍໃນພັກ”(3). ຈາກນັ້ນລັດໄດ້ຜັນຂະຫຍາຍອອກເປັນນິຕິກຳອັນລະອຽດເຊັ່ນ: ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍການກວດກາລັດ, ດຳລັດວ່າດ້ວຍການປະຢັດ ແລະຕ້ານການຟຸມເຟືອຍ...

ໃນໄລຍະຜ່ານມາອົງການກວດກາພັກ-ອົງການກວດກາລັດ ແຕ່ລະຂັ້ນໄດ້ສຸມໃສ່ປະຕິບັດວຽກງານຕາມພາລະບົດບາດ, ສິດ, ໜ້າທີ່ ແລະຄວາມຮັບຜິດຊອບຂອງຕົນ “ເຊິ່ງຜ່ານການກວດກາວຽກງານຕົວຈິງ ໄດ້ພົບເຫັນການຈັດຕັ້ງ ພັກ ແລະສະມາຊິກພັກຂັ້ນຕ່າງໆຖືກລົງວິໄນຄື: ກ່າວເຕືອນຄວາມຜິດ 6 ໜ່ວຍພັກ; ສະມາຊິກພັກຖືກລົງວິໄນທັງໝົດ 3.200 ສະຫາຍ, ຍິງ 372 ສະຫາຍ; ປົດຕຳແໜ່ງ 137 ສະຫາຍ ໃນນັ້ນ, ກ່າວເຕືອນຄວາມຜິດ 649 ສະຫາຍ, ປົດຕຳແໜ່ງ 137 ສະຫາຍ, ໂຈະຮ່ວມຊີວິດພັກ 623 ສະຫາຍ, ເອົາອອກຈາກພັກ 1.791 ສະຫາຍ. ການຕິດຕາມ-ກວດກາການບໍລິຫານລັດພົບເຫັນຜົນເສຍຫາຍທັງໝົດ 5.689,12

(1) ເອກະສານກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກປະຊາຊົນ ປະຕິວັດລາວ, ປີ 2011, ໜ້າ 52.

(2) ກົດລະບຽບຂອງພັກປະຊາຊົນ ປະຕິວັດລາວ ສະໄໝທີ X, ມາດຕາ 44, ປີ 2016, ໜ້າ 57.

(3) ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 88.

ຕື້ກວ່າກີບ, 31,77 ລ້ານກວ່າໂດລາ, 36,89 ລ້ານກວ່າບາດ ແລະລົດໃຫຍ່ 5 ຄັນ; ກວດພົບເຫັນການຄ້າງພັນທະ ແລະຄ້າງຊຳລະຄ່າໄມ້ໃຫ້ລັດ 121.120,861 ແມັດກ້ອນ, ມູນຄ່າ 66,57 ຕື້ກີບ ແລະ 4,87 ລ້ານໂດລາ. ການສືບສວນ-ສອບສວນຄະດີສໍ້ລາດບັງຫຼວງພົບເຫັນຜູ້ກະທຳຜິດ 749 ຄົນ (ພະນັກງານລັດ 639 ຄົນ); ດຳເນີນຄະດີ 130 (ພະນັກງານລັດ 93 ຄົນ); ສານຕັດສິນແລ້ວ 79 ຄົນ (ພະນັກງານລັດ 64 ຄົນ); ແກ້ໄຂທາງດ້ານບໍລິຫານທັງໝົດ 619 ຄົນ (ພະນັກງານລັດ 546 ຄົນ), ພົບຜົນເສຍຫາຍທັງໝົດ 746,27 ຕື້ກີບ, 362,10 ລ້ານບາດ, 14,21 ລ້ານໂດລາ”[1].

ເຖິງວ່າຄະນະພັກ, ອຳນາດການປົກຄອງ, ອົງການຈັດຕັ້ງຕ່າງໆໄດ້ເອົາໃຈໃສ່ຕໍ່ວຽກງານກວດກາ, ຕ້ານ ແລະສະກັດກັ້ນປາກົດການຫຍໍ້ທໍ້ໃນຖັນແຖວພະນັກງານ-ລັດຖະກອນ, ສະມາຊິກພັກ ຢູ່ບັນດາສຳນັກງານ, ອົງການຂັ້ນຕ່າງໆມີຜົນສຳເລັດຫຼາຍດ້ານກໍຕາມແຕ່ຍັງເຫັນວ່າມີບາງບັນຫາທີ່ຍັງຄົງຄ້າງເຊິ່ງຈະຕ້ອງໄດ້ແກ້ໄຂໃນຕໍ່ໜ້າດັ່ງນີ້:

ໜຶ່ງ, ຄະນະພັກ, ຄະນະນຳ ແລະອົງການປົກຄອງປົກຄອງຂັ້ນຕ່າງໆຍັງບໍ່ທັນເປັນເຈົ້າການໃນການຮ່ວມຊີວິດເພື່ອສຳຫຼວດກວດກາ, ການຕີລາຄາ, ປະເມີນຜົນ ແລະການຕຳນິສົ່ງຂ່າວຊ່ວຍເຫຼືອກໍ່ສ້າງເຊິ່ງກັນແລະກັນຍັງເຮັດບໍ່ທັນໄດ້ດີ, ຍັງເຮັດແບບລວມໆ, ເມື່ອເຫັນມີບັນຫາກໍບໍ່ໄດ້ຮັບການແກ້ໄຂຢ່າງເຂັ້ມງວດ, ເດັດຂາດ ແລະຍັງມີແນວຄິດເຫັນອົກເຫັນໃຈກັນ.

ສອງ, ການສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກທຸລະກິດ, ຕະຫຼອດຮອດປະຊາຊົນພົນລະເມືອງລາວກໍຄືຄົນຕ່າງປະເທດ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ, ການເຊື່ອມຊຶມບັນດາກົດໝາຍ, ນິຕິກຳຕ່າງໆຍັງບໍ່ທັນເລິກເຊິ່ງ ເຮັດໃຫ້ເກີດມີປາກົດການຫຍໍ້ທໍ້, ເຫັນແກ່ຜົນປະໂຫຍດສ່ວນຕົວຫຼາຍກວ່າສ່ວນລວມ.

ສາມ, ພະນັກງານ-ລັດຖະກອນ ແລະສະມາຊິກພັກໃນກົງຈັກລັດຈຳນວນໜຶ່ງຍັງຂາດສະຕິເຄົາລົບ ແລະປະຕິບັດລະບຽບ, ກົດໝາຍ, ການກຳແໜ້ນພາລະບົດບາດ, ຄວາມຮັບຜິດຊອບ, ໜ້າທີ່ວຽກງານຂອງຕົນ ໃນການຜັນຂະຫຍາຍແນວທາງຂອງພັກ, ລະບຽບ, ກົດໝາຍຂອງລັດທີ່ວາງອອກໃນແຕ່ລະໄລຍະໃຫ້ປາກົດຜົນເປັນຈິງຍັງເຮັດບໍ່ທັນໄດ້ ເຮັດໃຫ້ຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ແລະປະຊາຊົນຫຼຸດລົງເກີດມີການທໍ້ຖອຍໃນສັງຄົມ.

ສີ່, ພະນັກງານທີ່ເຮັດວຽກງານກວດກາ, ໜ່ວຍງານກວດກາຍັງບໍ່ທັນເປັນເຈົ້າການໃນການຄົ້ນຄວ້າ, ຮໍ່າຮຽນບັນດາກົດໝາຍ, ນິຕິກຳຕ່າງໆທີ່ກ່ຽວຂ້ອງເຖິງພາລະບົດບາດ, ສິດ, ໜ້າທີ່ຂອງຕົນ ຢ່າງເລິກເຊິ່ງ ເຮັດການກວດກາບາງກໍລະນີບໍ່ທັນລະອຽດຈະແຈ້ງ ເປັນສາເຫດເຮັດໃຫ້ການກວດກາຊັກຊ້າ, ແກ່ຍາວ.

ຫ້າ, ກົດໝາຍ ແລະນິຕິກຳທີ່ມີແລ້ວຍັງບໍ່ທັນຮັດກຸມ, ຈະແຈ້ງເທົ່າທີ່ຄວນ ແລະຍັງບໍ່ທັນສອດຄ່ອງກັບສະພາບຕົວຈິງຂອງແຕ່ລະໄລຍະເຮັດໃຫ້ເກີດມີຊ່ອງຫວ່າງໃນການກະທຳຄວາມຜິດ.

---

[1] ບົດສະຫຼຸບການເຄື່ອນໄຫວວຽກງານກວດກາ 5 ປີ (2016-2020), ປະຈຳປີ 2020 ແລະທິດທາງແຜນການປີ 2021 ຂອງຄະນະກວດກາສູນກາງພັກ, ໜ້າ 2-3.

ເພື່ອເສີມຂະຫຍາຍມູນເຊື້ອ, ຮ່ຳຮຽນເອົາແບບຢ່າງແນວຄິດທິດສະດີ ແລະແບບຢ່າງການນຳພາ-ຊີ້ນຳ ຂອງປະທານໄກສອນ ພົມວິຫານ ໃຫ້ສອດຄ່ອງກັບສະພາບຈຸດພິເສດຄວາມເປັນຈິງ ແລະເພື່ອເຮັດໃຫ້ວຽກງານກວດກາມີຄຸນນະພາບສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານວິຊາສະເພາະ ແລະທັງຮັບປະກັນໃຫ້ຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ ແລະລະບຽບ, ກົດໝາຍຕ່າງໆຂອງລັດນັ້ນຕາມທັດສະນະຂອງຜູ້ຂຽນແລ້ວເຫັນວ່າຄວນເອົາໃຈໃສ່ບາງວຽກງານດັ່ງນີ້:

1). ເພີ່ມທະວີການນຳພາ-ຊີ້ນຳຂອງຄະນະພັກ, ຄະນະນຳ ແລະອົງການປົກຄອງຂັ້ນຕ່າງໆ ໃນການຄົ້ນຄວ້າ, ເຜີຍແຜ່ເຊື່ອຊຶມແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບ, ກົດໝາຍ ແລະລະບຽບການຕ່າງໆ ໂດຍສະເພາະແມ່ນພາລະບົດບາດຂອງວຽກງານກວດກາ, ບັນດານິຕິກຳກ່ຽວກັບວຽກງານກວດກາ, ເປັນຕົ້ນແມ່ນກົດໝາຍວ່າດ້ວຍການກວດກາລັດ, ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຫຼື ນິຕິກຳອື່ນໆກ່ຽວກັບວຽກງານກວດກາໃຫ້ສະມາຊິກທຸກຄົນຮັບຮູ້ ແລະເຂົ້າໃຈຢ່າງເລິກເຊິ່ງ ແລະປະກອບສ່ວນເຂົ້າຮ່ວມໃນວຽກງານຕິດຕາມ, ກວດກາ. ດັ່ງທີ່ປະທານໄກສອນ ພົມວິຫານ ເຄີຍເວົ້າວ່າ: "ເພີ່ມທະວີວຽກງານກວດກາ, ກວດການ, ພິຈາລະນາຕັດສິນບັນຫາເປັນໜ້າທີ່ທີ່ສຳຄັນອັນໜຶ່ງຂອງບັນດາອົງການລັດ"(1);

2). ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກທຸລະກິດ, ຕະຫຼອດຮອດປະຊາຊົນ ໃຫ້ເປັນລະບົບ ແລະຕໍ່ເນື່ອງ, ສ້າງໃຫ້ເຂົາເຈົ້າມີຈັນຍາບັນທີ່ຖືກຕ້ອງ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຊື່ສັດບໍລິສຸດ, ຫ້າວຫັນບຸກບືນໃນການປະຕິບັດໜ້າທີ່ວຽກງານທີ່ການຈັດຕັ້ງມອບໝາຍໃຫ້ດ້ວຍຄວາມຮັບຜິດຊອບສູງ ໃຫ້ສົມກັບຄຳເວົ້າທີ່ວ່າ: "ພະນັກງານແມ່ນປັດໄຈຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍຂອງພັກ"(2) .

3). ຄະນະກວດກາ, ພະນັກງານທີ່ເຮັດວຽກງານກວດກາຄວນເອົາໃຈໃສ່ຄົ້ນຄວ້າກຳແໜ້ນແນວທາງ, ທັດສະນະຂອງພັກ, ກົດໝາຍ ແລະລະບຽບການຂອງລັດ, ຄວນຫັນເອົາແຜນນະໂຍບາຍຂອງພັກ, ບັນດານິຕິກຳກ່ຽວກັບວຽກງານກວດກາມາເປັນແຜນການ, ແຜນງານອັນລະອຽດຂອງຕົນເພື່ອເຄື່ອນໄຫວໃຫ້ເປັນປົກກະຕິ. ດັ່ງຄຳເວົ້າຂອງປະທານ ໄກສອນ ພົມວິຫານທີ່ວ່າ: "ຢາກເຮັດວຽກງານກວດກາທີ່ດີ ກ່ອນອື່ນໝົດຕ້ອງເອົາໃຈໃສ່ປັບປຸງ ແລະຍົກລະດັບຄຸນນະພາບຂອງອົງການນີ້, ໃນນັ້ນ, ຕ້ອງປະກອບພະນັກງານຜູ້ທີ່ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ມີຄວາມຮູ້ທາງດ້ານກົດໝາຍ, ເສດຖະກິດ ຮູ້ຈຳແນກການປະພຶດຂອງຄົນ"(3) .

4). ເອົາໃຈໃສ່ປັບປຸງບັນດາກົດໝາຍ, ນິຕິກຳທີ່ໄດ້ປະກາດໃຊ້ແລ້ວໃຫ້ຮັດກຸມກວ່າ

(1) ເອກະສານກອງປະຊຸມຄົບຄະນະ ຄັ້ງທີ 5 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ IV, ປີ 1988, ໜ້າ 186.

(2) ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 90.

(3) ບົດຄວາມເຫັນຂອງປະທານ ໄກສອນ ພົມວິຫານ ຕໍ່ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 7, ວັນທີ 17 ທັນວາ ປີ 1991.

ເກົ່າເປັນຕົ້ນແມ່ນ: ກົດໝາຍວ່າດ້ວຍການກວດກາລັດ, ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ນິຕິກຳກ່ຽວກັບການປະຢັດ ແລະ ຕ້ານການຟຸມເຟືອຍ... ເພື່ອບໍ່ໃຫ້ມີຊ່ອງຫວ່າງ ແນໃສ່ຮັບປະກັນຄວາມຍຸຕິທຳ ແລະເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງແຜນພັດທະນາເສດຖະກິດ-ສັງຄົມຂອງລັດໃນແຕ່ລະໄລຍະ ຄວນຄົ້ນຄວ້າ ແລ້ວຜັນຂະຫຍາຍ, ສ້າງເປັນນິຕິກຳຢູ່ໃນແຕ່ລະຂົງເຂດວຽກງານທີ່ເຫັນວ່າມີຄວາມຈຳເປັນ, ຄຽງຄູ່ກັບການແຈ້ງຊັບສິນລາຍຮັບ-ລາຍຈ່າຍຂອງພະນັກງານໃຫ້ເປັນປົກກະຕິ.

5). ເພີ່ມປະສິດທິພາບຂອງວຽກງານກວດກາ ເພາະວ່າວຽກງານກວດກາແມ່ນໜຶ່ງໃນພາລະບົດບາດ ແລະແບບແຜນການນຳພາທີ່ສຳຄັນຂອງພັກ ບໍ່ມີການກວດກາກໍໝາຍຄວາມວ່າບໍ່ມີການນຳພາ. ຄະນະພັກແຕ່ລະຂັ້ນຕ້ອງໄດ້ເປັນເຈົ້າການໃນການນຳພາ-ຊີ້ນຳ ການຕິດຕາມ, ກວດກາບັນດາໂຄງການຕ່າງໆທີ່ແມ່ນການລົງທຶນຂອງລັດ, ການເກັບພາສີອາກອນ ແລະການຄຸ້ມຄອງບໍລິຫານຂອງລັດຕາມຫຼັກການຂອງພັກ ແລະກົດໝາຍຂອງລັດ; ຄົ້ນຄວ້າວາງລະບອບ, ລະບຽບກົນໄກການຕິດຕາມ, ກວດກາໃຫ້ຮັດກຸມ; ຕິດຕາມ, ກວດກາບັນດາອົງການອຳນາດລັດໃນການປະຕິບັດກົດໝາຍ, ລະບຽບການຕ່າງໆ ແລະປາກົດການຫຍໍ້ທໍ້, ການສໍ້ລາດບັງຫຼວງທີ່ເກີດຂຶ້ນໃນກົງຈັກການຈັດຕັ້ງ, ຖືເອົາການສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງເປັນຄວາມຮັບຜິດຊອບຂອງພັກ, ຂອງທຸກການຈັດຕັ້ງສ້າງເງື່ອນໄຂໃຫ້ຄະນະກວດກາແຕ່ລະຂັ້ນປະຕິບັດພາລະບົດບາດຂອງຕົນໃຫ້ມີປະສິດທິພາບສູງ.

6, ເອົາໃຈໃສ່ໃນການໂຄສະນາເຜີຍແຜ່, ປະຊາສຳພັນ, ໃຫ້ຄວາມຮູ້ ແລະສ້າງຄວາມເຂົ້າໃຈໃຫ້ແກ່ສັງຄົມ ໄພອັນຕະລາຍຂອງການສໍ້ລາດບັງຫຼວງ, ປາກົດການອາດຍາສິດ, ການຟຸມເຟືອຍ ແລະປາກົດການຫຍໍ້ທໍ້ຕ່າງໆ, ພ້ອມກັນນັ້ນກໍຕ້ອງປະຕິບັດທຸກວິທີທາງອັນ ເໝາະສົມ, ຖືກຕ້ອງ ເພື່ອຕ້ານ ແລະສະກັດກັ້ນປາກົດການຫຍໍ້ທໍ້ໃຫ້ນັບມື້ຫຼຸດໜ້ອຍຖອຍລົງ ແລະຫາກມີການກະທຳຜິດຕໍ່ລະບຽບກໍຕ້ອງມີການລົງວິໄນ ຫຼື ດຳເນີນຕາມຂະບວນການຍຸຕິທຳ.

ສັງລວມແລ້ວ, ແນວຄິດໄກສອນ ພົມວິຫານ ກ່ຽວກັບວຽກງານກວດກາແມ່ນມີຄວາມສຳຄັນຢ່າງຍິ່ງໃນພາລະກິດປ່ຽນແປງໃໝ່, ສ່ອງແສງໃຫ້ເຫັນແຈ້ງຄວາມເປັນຫ່ວງເປັນໄຍ ແລະເປັນເຂັມຊີ້ທິດເຍືອງທາງໃຫ້ແກ່ການເຄື່ອນໄຫວວຽກງານກວດກາແຕ່ລະດ້ານ ເຊິ່ງຕະຫຼອດໄລຍະຜ່ານມາອົງການທີ່ກ່ຽວຂ້ອງຂັ້ນຕ່າງໆໄດ້ຮ່ຳຮຽນ ແລະໝູນໃຊ້ແນວຄິດດັ່ງກ່າວເຂົ້າໃນການເຄື່ອນໄຫວວຽກງານຕົວຈິງ ເຮັດໃຫ້ສາມາດບັນລຸໄດ້ຜົນສຳເລັດແຕ່ລະດ້ານ. ເຖິງຢ່າງໃດກໍຕາມຍັງມີປາກົດການທີ່ສະແດງໃຫ້ເຫັນເຖິງການໝູນໃຊ້ແນວຄິດຂອງທ່ານຍັງບໍ່ທັນໄດ້ທັງໝົດເຮັດໃຫ້ເກີດມີຈຸດອ່ອນຈຳນວນໜຶ່ງ. ສະນັ້ນ, ເພື່ອແນໃສ່ແກ້ໄຂຈຸດອ່ອນ ແລະແນ່ໃສ່ເຮັດໃຫ້ການເຄື່ອນໄຫວວຽກງານກວດກາໃນຕໍ່ໜ້າມີປະສິດທິຜົນສູງຂຶ້ນກວ່າເກົ່ານັ້ນຄວນສືບຕໍ່ເສີມຂະຫຍາຍແນວຄິດໄກສອນ ພົມວິຫານກ່ຽວກັບວຽກງານກວດກາ ໃນແຕ່ລະດ້ານທີ່ນຳສະເໜີມາຂ້າງເທິງນັ້ນໃຫ້ກວ້າງຂວາງກວ່າເກົ່າແລະນຳໄປຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນຍິ່ງໆຂຶ້ນ.

# ແນວຄິດ ໄກສອນ ພົມວິຫານ ກ່ຽວກັບການຄຸ້ມຄອງເສດຖະກິດ ຂອງລັດ ຢູ່ປະເທດເຮົາ.

ຂຽນໂດຍ: ສະຫວ່າງ ຊາມຸນຕີ

ພາຍຫຼັງພັກເຮົາໄດ້ມີແນວທາງປ່ຽນແປງໃໝ່ ພັກໄດ້ຮັບຮູ້ແຈ້ງວ່າໃນສະໄໝຂ້າມຜ່ານກ້າວຂຶ້ນສັງຄົມນິຍົມເສດຖະກິດ ຂອງປະເທດເຮົາຍັງມີຫຼາຍພາກສ່ວນ ມີທັງພາກສ່ວນເສດຖະກິດສັງຄົມນິຍົມ ແລະບໍ່ແມ່ນສັງຄົມນິຍົມ ຄືງຕົວພາຍໃຕ້ຫຼາຍຮູບການກຳມະສິດ ໃນດ້ານໂຄງປະກອບແລ້ວ ພາກສ່ວນເສດຖະກິດຂອງລັດ ຍັງໜ້ອຍໂພດ ໃນເມື່ອກ່ອນຢູ່ເຂດປົດປ່ອຍເກົ່າໄດ້ມີຮາກຖານການຜະລິດຈຳນວນໜຶ່ງເຊັ່ນ: ໂຮງງານກົນຈັກ, ໂຮງງານຕີເຫຼັກ, ໂຮງງານຕ່ຳແຜ່ນ, ໂຮງງານຜະລິດຢາປົວພະຍາດ...ແຕ່ຄຸນຄ່າທາງດ້ານເສດຖະກິດຂອງມັນບໍ່ທັນຫຼາຍພໍປານໃດ; ຢູ່ໃນເຂດປົດປ່ອຍໃໝ່ມີບັນດາພື້ນຖານທີ່ຮັບໃຊ້ການເຄື່ອນໄຫວປະຈຳວັນເຊັ່ນ: ໄຟຟ້າ, ນ້ຳປະປາ, ການກໍ່ສ້າງເຄຫາສະຖານ, ການສ້ອມແປງລົດ ແລະຖະໜົນຫົນທາງ, ມີພາຫະນະຂົນສົ່ງທາງອາກາດ, ທາງບົກ ແລະທາງນ້ຳ ເຊິ່ງມີຮາກຖານອຸດສາຫະກຳຈຳນວນໜຶ່ງເປັນຫົ່ແໜງແມ່ນເຂື່ອນໄຟຟ້ານ້ຳງື່ມ.

ປະທານ ໄກສອນ ພົມວິຫານ ໄດ້ຄົ້ນຄວ້າ, ທົບທວນຕີລາຄາ ແລະຖອດຖອນບົດຮຽນພຶດຕິກຳໃນການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ ຂອງພັກ ຢ່າງພາວະວິໄສ ເພິ່ນໃຫ້ທັດສະນະວ່າ: "ອີງໃສ່ຄວາມສາມາດຕົວຈິງ ຂອງເສດຖະກິດ ແລະຊັບພະຍາກອນຂອງປະເທດເຮົາໃນປັດຈຸບັນ ພວກເຮົາອາດຢືນຢັນໄດ້ວ່າ: ພາຍໃຕ້ຜະເດັດການກຳມະຊີບ, ການຊຸກຍູ້ການຜະລິດກະສິກຳ, ການປ່າໄມ້, ການລ້ຽງສັດ ແລະບາງຂະແໜງອຸດສາຫະກຳເບົາ ເພື່ອກຸ້ມຕົນເອງທາງດ້ານທັນຍາຫານ, ເຄື່ອງໃຊ້ສອຍອັນຈຳເປັນ ແລະຜະລິດຕະພັນສຳລັບການແລກປ່ຽນກັບຕ່າງປະເທດ ນຳເອົາສິນຄ້າໃຊ້ສອຍມາຕອບສະໜອງຄວາມຕ້ອງການຂອງປະຊາຊົນ ແລະຂອງລັດໃນລະດັບອັນຈຳເປັນນັ້ນເປັນບັນຫາທີ່ສາມາດປະຕິບັດໄດ້ພາຍໃນໄລຍະບໍ່ດົນປານໃດ ແຕ່ໜ້າທີ່ກໍ່ສ້າງຮາກຖານວັດຖຸ-ເຕັກນິກ ແລະການຄຸ້ມຄອງເສດຖະກິດ ແລະຄຸ້ມຄອງການຜະລິດທຸລະກິດສັງຄົມນິຍົມເປັນຕົ້ນແມ່ນໜ້າທີ່ຫັນການຜະລິດກະສິກຳນ້ອຍຫຼ້າຫຼັງໃຫ້ກາຍເປັນການຜະລິດໃຫຍ່ສັງຄົມນິຍົມນັ້ນ ເປັນອັນແນ່ນອນວ່າຈະຕ້ອງໄດ້ຕິດພັນກັບການຫັນເປັນອຸດສາຫະກຳສັງຄົມນິຍົມມັນຮຽກຮ້ອງໃຫ້ມີລະດັບຄວາມສາມາດຄຸ້ມຄອງເກັ່ງ, ຄວາມສາມາດດ້ານເຕັກນິກສູງ ແລະມີທຶນຮອນຫຼາຍ. ອັນນັ້ນເປັນໜ້າທີ່ທີ່ຫຍຸ້ງຍາກສັບສົນທີ່ສຸດ ແລະຕ້ອງດຳເນີນເປັນເວລາຍາວນານຈຶ່ງຈະສຳເລັດໄດ້"[1].

ຢາກໃຫ້ມີກຳລັງພຽງພໍຮອບດ້ານເຂັ້ມແຂງເພື່ອຕອບໂຕ້ທຸກອິດທິກຳລັງປໍລະປັກ ແລະປະຕິການ, ປົກປັກຮັກສາໝາກຜົນຂອງ

(1) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ II, ປີ 1987, ໜ້າ 20

ການປະຕິບັດ, ມີຄວາມສາມາດພຽງພໍໃນການດັດສ້າງ ແລະກໍ່ສ້າງສັງຄົມນິຍົມໃຫ້ສຳເລັດຜົນນັ້ນ ພວກເຮົາຍັງຕ້ອງໄດ້ຮັກສາເສດຖະກິດທີ່ມີຫຼາຍພາກສ່ວນໄວ້ພາຍໃນໄລຍະເວລາໃດໜຶ່ງ. ຍ້ອນແນວນັ້ນໜໍ່ແໜງທຶນນິຍົມເກີດເອງກໍຍັງມີຢູ່, ຈາກນັ້ນພວກເຮົາຕ້ອງກຳແໜ້ນບັນຫາທີ່ເປັນຂໍກະແຈໃນສະເພາະໜ້າກໍຄືໃນຍາວນານຄື: "ຕ້ອງຮີບຮ້ອນ, ເດັດດ່ຽວສຸມກຳລັງເຂົ້າໃສ່ການກໍ່ສ້າງຂົງ ເຂດເສດຖະກິດ ຂອງລັດໃຫ້ເປັນຕົນເປັນຕົວຂຶ້ນ ແລະປັບປຸງຂະຫຍາຍມັນ, ເຮັດໃຫ້ມັນຄົບຖ້ວນບໍລິບູນຢ່າງບໍ່ຢຸດຢັ້ງ"(1). ເພາະຂົງເຂດເສດຖະກິດຂອງລັດ ມີບົດບາດເປັນເຈົ້າພາທາງ ແລະເປັນພື້ນຖານສຳຄັນກວ່າໝູ່ຂອງເສດຖະກິດແຫ່ງຊາດສັງຄົມນິຍົມ, ພ້ອມກັນນັ້ນກໍຕ້ອງມີວິທີການອັນເໝາະສົມ ເພື່ອດຳເນີນການດັດສ້າງ ແລະກໍ່ສ້າງພາກສ່ວນເສດຖະກິດອື່ນ ໄປຕາມທິດກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ.

ກ່ຽວກັບການຄຸ້ມຄອງວິສາຫະກິດ ຂອງລັດ ຢູ່ປະເທດເຮົາ ປະທານ ໄກສອນ ພົມວິຫານ ໄດ້ເນັ້ນໜັກວ່າ: "ໃນການກໍ່ສ້າງ ແລະຂະຫຍາຍເສດຖະກິດຍາມໃດກໍຕ້ອງກຳແໜ້ນຂອດກໍ່ສ້າງ ແລະເພີ່ມທະວີຂົງເຂດເສດຖະກິດຂອງລັດ ເພື່ອເປັນພື້ນຖານໃຫ້ແກ່ການດັດສ້າງ ແລະກໍ່ສ້າງສັງຄົມນິຍົມ. ໃນຂົງເຂດເສດຖະກິດ ຂອງລັດຕ້ອງເອົາໃຈໃສ່ເປັນພິເສດແກ້ໄຂຂອດຄົມມະນາຄົມຂົນສົ່ງ, ນຳໃຊ້ເຄື່ອງມືດັດແປງ ແລະເຄື່ອງມືທັນສະໄໝເຂົ້າໃນການຜະລິດ"(2). ເພື່ອໄຂຊ່ອງທາງໃຫ້ກຳລັງການຜະລິດຂະຫຍາຍຕົວ, ກ້າວຂຶ້ນເທື່ອລະກ້າວສູ່ການກໍ່ສ້າງສັງຄົມນິຍົມໃຫ້ສຳເລັດຜົນນັ້ນ, ຄວນເສີມຂະຫຍາຍບົດບາດ ຂອງເສດຖະກິດຂອງລັດ, ໃຊ້ລະບົບແຈກຢາຍຈໍລະຈອນຢ່າງຄົບຊຸດໂດຍແມ່ນລັດເປັນຜູ້ຄຸ້ມຄອງສຳລັບພາກສ່ວນເສດຖະກິດລັດໃນຂະແໜງກະສິກຳ-ປ່າໄມ້, ອຸດສາຫະກຳ, ຂົນສົ່ງ ແລະກໍ່ສ້າງພື້ນຖານນັ້ນ, ໃນຫຼາຍປີຂ້າງໜ້ານີ້ທິດຕົ້ນຕໍແມ່ນເພີ່ມເຄື່ອງປະກອບ ແລະຮີບຮ້ອນເປີດກວ້າງຮາກຖານຕ່າງໆທີ່ມີຢູ່ແລ້ວ, ກໍ່ສ້າງກິດຈະການຂະໜາດນ້ອຍ ແລະຂະໜາດກາງຈຳນວນໜຶ່ງຂຶ້ນໃໝ່, ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: "ຕ້ອງເພີ່ມທະວີການຄຸ້ມຄອງ, ນຳໃຊ້ຄວາມສາມາດ ຂອງໂຮງຈັກໂຮງງານ ຂອງລັດໃຫ້ດີຂຶ້ນກວ່າເກົ່າ, ເພື່ອປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຟື້ນຟູ ແລະຂະຫຍາຍການຜະລິດ, ເປັນແບບຢ່າງໃນການຄຸ້ມຄອງເສດຖະກິດ, ຄຸ້ມຄອງເຕັກນິກ, ເພີ່ມຜະລິດຕະພາບ ຂອງງານ, ລົດລາຄາສຳເລັດຮູບລົງ ແລະຍົກຜະລິດຕະພາບຂອງຜະລິດຕະພັນໃຫ້ສູງຂຶ້ນ"(3). ເພື່ອເປັນບ່ອນອີງໃຫ້ແກ່ການຊຸກຍູ້ການດັດສ້າງສັງຄົມນິຍົມຕໍ່ຮາກຖານການຜະລິດໃນຂະແໜງດຽວກັນ ທີ່ສັງກັດໃນພາກສ່ວນເສດຖະກິດອື່ນ; ເປັນໂຮງຮຽນເພື່ອກໍ່ສ້າງ, ບຳລຸງກຳມະກອນ ແລະພະນັກງານໃນພາກຕົວຈິງແຫ່ງການຜະລິດ. ໃນເວລາດຽວກັນນັ້ນ, ຕ້ອງອອກແຮງກໍ່ສ້າງຢ່າງຄົບຊຸດເພື່ອເສີມຂະຫຍາຍບົດບາດ ຂອງຂົງເຂດການຜະລິດ ຂອງລັດຢ່າງຕັ້ງໜ້າກວ່າເກົ່າ.

ພວກເຮົາຂະຫຍາຍກຳລັງການຜະລິດ, ດຳເນີນການທັນເປັນອຸດສາຫະກຳໃນເງື່ອນໄຂທີ່ມີລະບົບສັງຄົມແຫ່ງໂລກທີ່ເຂັ້ມແຂງ

(1),(2) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ, ເຫຼັ້ມ II, ປີ 1987, ໜ້າ 21,31.

ໄກສອນ ພົມວິຫານ ນິພົນເລືອກເຟັ້ນ, ເຫຼັ້ມ III, ປີ 1997, ໜ້າ 147.

ສະນັ້ນ, ສາມາດກ້າວຂຶ້ນຈາກກະສິກຳ-ປ່າໄມ້, ເອົາກະສິກຳ-ປ່າໄມ້ເປັນຮາກຖານໃຫ້ແກ່ພາລະກິດຫັນເປັນອຸດສາຫະກຳນັ້ນເປັນການໝູນໃຊ້ທ່າແຮງທາງດ້ານເສດຖະກິດ ຂອງປະເທດເຮົາ ສົມທົບກັບກຳລັງແຮງ ຂອງໝົດທັງຄ້າຍສັງຄົມນິຍົມ ແລະຂອງຍຸກສະໄໝ. ໃນຂັ້ນຫົວທີລັດຕ້ອງກຳບາງຂະແໜງເສດຖະກິດທີ່ເປັນຂໍກຸນແຈ, ທີ່ພົວພັນເຖິງເສດຖະກິດແຫ່ງຊາດທັງໝົດໃຫ້ໄດ້ເຊັ່ນ: ທະນາຄານ, ການຄ້າຕ່າງປະເທດ, ການຄ້າຂາຍຍົກ, ບາງຮາກຖານອຸດສາຫະກຳ, ຮາກຖານຂົນສົ່ງ, ຮາກຖານກໍ່ສ້າງຂະໜາດໃຫຍ່ ເພື່ອເຮັດໃຫ້ເສດຖະກິດລັດວິສາຫະກິດດຳລົງບົດບາດເປັນເຈົ້າພາທາງ, ເພື່ອແນະນຳ, ດັດສ້າງ ແລະນຳໃຊ້ພາກສ່ວນເສດຖະກິດອື່ນໆ.

ປະທານ ໄກສອນ ພົມວິຫານເວົ້າວ່າ: "ຢ່າງໃດກໍດີໃນນັ້ນທຳອິດ ລັດບໍ່ຄວນຈະອູ້ມເອົາໝົດທຸກສິ່ງທຸກອັນ ເພາະວ່າຄວາມສາມາດ ຂອງລັດຍັງມີອັນຈຳກັດ, ຖ້າຫາກວ່າແຍກກຳລັງໄປເຮັດທຸກສິ່ງທຸກອັນແລ້ວບໍ່ພຽງແຕ່ຈະບໍ່ສາມາດສຸມໃສ່ເຮັດອັນໃຫຍ່, ອັນຕົ້ນຕໍໄດ້ເທົ່ານັ້ນກະທັ້ງອັນນ້ອຍ, ອັນສຳຮອງກໍຈະບໍ່ເຮັດໄດ້ອີກຊ້ຳ"(1). ໃນໄລຍະທີ່ຜ່ານມາບາງທ້ອງຖິ່ນ, ບາງຂະແໜງການຂອງພວກເຮົາໄດ້ດຳເນີນການໂອນມາເປັນກຳມະສິດ ຂອງລັດ, ໄດ້ຊື້ ແລະ "ຮັບເອົາ" ຫຼາຍໂຮງງານທີ່ຈຳເປັນ, ບາດວ່າປະໃຫ້ເປັນ ຂອງລັດແລ້ວຫຼາຍໂຮງງານທີ່ຜະລິດ, ການທຸລະກິດ ຂອງໂຮງງານຕົກຕ່ຳລົງ, ຜູ້ອອກແຮງງານບໍ່ມີວຽກເຮັດງານທຳພຽງພໍ, ລັດຈຳຕ້ອງລົງທຶນລ້ຽງໂຮງງານ, ຈ່າຍເງິນເດືອນໃຫ້ກຳມະກອນ, ບົວລະບັດຮັກສາເຄື່ອງຈັກເຄື່ອງລານ. ສະພາບເຊັ່ນນັ້ນໄດ້ນຳຜົນເສຍຫາຍໃຫຍ່ມາໃຫ້ແກ່ເສດຖະກິດ ແລະຊີວິດການເປັນຢູ່ ຂອງປະຊາຊົນ. ດ້ວຍເຫດນັ້ນໃນການສ້າງເສດຖະກິດລັດວິສາຫະກິດຕ້ອງເດັດດ່ຽວສຸມໃສ່ສ້າງໃຫ້ເປັນວິສາຫະກິດຂອງລັດຖືກຕາມແບບວິທີຜະລິດທຸລະກິດສັງຄົມນິຍົມ. ຊັບສົມບັດຂອງວິສາຫະກິດຕ້ອງໄດ້ກວດກາຂຶ້ນບັນຊີ, ລັດເປັນຜູ້ມອບທຶນ, ມອບຊັບສົມບັດ, ມອບແຜນການ ເພື່ອໃຫ້ຄະນະອຳນວຍການ ແລະໝູ່ຄະນະກຳມະກອນເປັນຜູ້ຄຸ້ມຄອງທຸລະກິດເຮັດແນວໃດໃຫ້ມີວັດຖຸສິ່ງຂອງ, ດຳເນີນທຸລະກິດຢ່າງຖືກຕ້ອງຕາມທິດທາງ, ແຜນການ, ເກັບກູ້ເອົາທຶນ, ທັງມີກຳໄລທັງຮັບປະກັນໃຫ້ຊີວິດການເປັນຢູ່ ຂອງພະນັກງານ, ກຳມະກອນເປັນປົກກະຕິ ແລະໄດ້ຮັບການປັບປຸງດີຂຶ້ນ.

ສັງລວມແລ້ວ ຕ້ອງເຮັດໃຫ້ວິສາຫະກິດຂອງລັດດຳເນີນການຜະລິດ ແລະທຸລະກິດລື່ນເອກະຊົນເທື່ອລະກ້າວ ຖ້າຫາກວິສາຫະກິດໃດທີ່ລັດຈຳເປັນຕ້ອງກຳ, ແຕ່ພວກເຮົາບໍ່ທັນມີຄວາມຮູ້ໃນດ້ານຄຸ້ມຄອງຢ່າງພຽງພໍ, ບໍ່ທັນມີລະດັບວິທະຍາສາດເຕັກນິກເພື່ອເຮັດເທື່ອກໍຄວນໃຊ້ຜູ້ຊ່ຽວຊານຕ່າງປະເທດ ຫຼື ຮ່ວມມືກັບຕ່າງປະເທດ, ຮັບເອົາການລົງທຶນ ຂອງຕ່າງປະເທດຕາມກົດໝາຍ ຂອງພວກເຮົາ ເຊິ່ງກ່ອນອື່ນໝົດແມ່ນຮ່ວມມື ແລະຮັບເອົາການລົງທຶນ ຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງ. ເຮັດແນວນັ້ນຈຶ່ງຈະເຮັດໄດ້ໄວ ແລະໄດ້ດີ, ຈຶ່ງຈະເຮັດໃຫ້ເສດຖະກິດລັດເປັນພາກສ່ວນໜຶ່ງ ໃນສອງພາກສ່ວນເສດຖະກິດຕົ້ນຕໍໃນສັງຄົມນິຍົມໄດ້ເປັນເທື່ອລະກ້າວ. ແຕ່ໃນ

(1) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ, ເຫຼັ້ມ III, ປີ 1997, ໜ້າ 147.

ເງື່ອນໄຂທີ່ພວກເຮົາເລີ່ມຈາກເສດຖະກິດຫຼ້າຫຼັງກ້າວຂຶ້ນນັ້ນກຳລັງເສດຖະກິດ ຂອງລັດໃນເບື້ອງຕົ້ນ ຈຶ່ງອ່ອນນ້ອຍທີ່ສຸດ. ແຕ່ຖານະເປັນກຳລັງເສດຖະກິດຂອງລັດ ກໍຄືເປັນຜູ້ກຳອຳນາດການເມືອງ ແລະກຳໄດ້ສາຍເລືອດຕົ້ນຕໍ ຂອງເສດຖະກິດແຫ່ງຊາດເຊັ່ນ: ການເງິນ, ທະນາຄານ, ການຄ້າພາຍໃນ, ການຄ້າຕ່າງປະເທດ... ນັ້ນລັດຈຶ່ງມີຄວາມສາມາດນຳໃຊ້ກຳລັງເສດຖະກິດ ຂອງຕົນກະທົບໃສ່ພາກສ່ວນເສດຖະກິດອື່ນໆໄດ້. ວິທີການຈັດຕັ້ງເສດຖະກິດ ຂອງລັດຕາມແບບລວມສູນອາດຍາສິດ ແລະບໍລິຫານເກື້ອກູນຄືໄລຍະຜ່ານມາແມ່ນໄດ້ຕັດແຍກ ແລະຂັດກັບພາກສ່ວນເສດຖະກິດອື່ນ, ເຮັດໃຫ້ເສດຖະກິດ ຂອງລັດສູນເສຍຄວາມມີຊີວິດຊີວາ ແລະຄວາມສັກສິດຂອງຕົນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນໃນການປົດປ່ອຍ ແລະຂະຫຍາຍກຳລັງການຜະລິດ, ຫັນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ, ຫັນຈາກກົນໄກລວມສູນອາດຍາສິດບໍລິຫານເກື້ອກູນ ໄປສູ່ກົນໄກເປັນເຈົ້າຕົນເອງໃນດ້ານທຸລະກິດ ແລະເສີມຂະຫຍາຍຄຸນປະໂຫຍດ ຂອງພາກສ່ວນເສດຖະກິດຕ່າງໆ ນັ້ນມັນພວມເລັ່ງທວງໃຫ້ດັດແປງລະບົບເສດຖະກິດ ຂອງລັດຄືນໃໝ່ທັງໝົດ. ເພິ່ນໄດ້ຊີ້ນຳວ່າ: "ພາກສ່ວນເສດຖະກິດຂອງລັດ ໃນຖານະເປັນອົງການທຸລະກິດອັນໜຶ່ງທີ່ມີຄວາມສະເໝີພາບກັບພາກສ່ວນເສດຖະກິດອື່ນ. ພ້ອມກັນນັ້ນກໍເປັນຜູ້ເສີມຂະຫຍາຍຄຸນປະໂຫຍດໃນການແນະນຳ ແລະບໍລິການໃຫ້ແກ່ພາກສ່ວນເສດຖະກິດອື່ນໆອີກດ້ວຍ. ຢາກປະຕິບັດພາລະບົດບາດດັ່ງກ່າວນັ້ນໄດ້, ກ່ອນອື່ນໝົດເສດຖະກິດຂອງລັດຕ້ອງດັດແປງການຈັດຕັ້ງ ແລະກົນໄກຄຸ້ມຄອງຂອງຕົນຢ່າງແທ້ຈິງ ໂດຍຕິດພັນກັບພາກສ່ວນເສດຖະກິດອື່ນໆ ທີ່ຢູ່ໃນໂຄງປະກອບລວມອັນດຽວ"(1). ໃນພາກສ່ວນເສດຖະກິດ ຂອງລັດນັ້ນອັນພົ້ນເດັ່ນຂຶ້ນແມ່ນບົດບາດ ຂອງການຄ້າ(ນັບທັງການຄ້າພາຍໃນ ແລະການຄ້າຕ່າງປະເທດ), ທະນາຄານ ແລະການເງິນ. ການຄ້າແລະທະນາຄານ ຕ້ອງຫັນໄປສູ່ການໄລ່ລຽງທຸລະກິດຢ່າງຂາດຕົວ, ຕ້ອງກາຍ ເປັນຕາໜ່າງອັນກວ້າງຂວາງໃນທົ່ວປະເທດຢ່າງແທ້ຈິງແລະຕິດພັນກັບທຸກການເຄື່ອນໄຫວ ຂອງຫົວໜ່ວຍທຸລະກິດຕ່າງໆ ທີ່ຢູ່ໃນພາກສ່ວນເສດຖະກິດທີ່ຕ່າງກັນ.

ຕໍ່ກັບພາກສ່ວນເສດຖະກິດຮາກຖານ ເພິ່ນຍັງໃຫ້ທັດສະນະວ່າ: "ການດັດແປງກົນໄກຄຸ້ມຄອງເສດຖະກິດ ສຳລັບບັນດາຫົວໜ່ວຍເສດຖະກິດຮາກຖານເວົ້າລວມ, ເສດຖະກິດຂອງລັດເວົ້າສະເພາະໃຫ້ໄປຕາມທິດຫັນໄປສູ່ກົນໄກໄລ່ລຽງທຸລະກິດນັ້ນ ແມ່ນເພື່ອແນໃສ່ເຮັດໃຫ້ບັນດາຫົວໜ່ວຍເຫຼົ່ານັ້ນຂະຫຍາຍການຜະລິດທຸລະກິດຢ່າງມີປະສິດທິຜົນ ແລະໄດ້ຮັບການກໍ່ສ້າງໃຫ້ນັບມື້ນັບເຂັ້ມແຂງໃນດ້ານເສດຖະກິດ, ການຈັດຕັ້ງ, ການເມືອງ, ສັງຄົມ ເຮັດໃຫ້ມັນມີຄວາມສາມາດພຽງພໍໃນການເສີມຂະຫຍາຍບົດບາດນຳໜ້າພາທາງຕໍ່ພາກສ່ວນເສດຖະກິດອື່ນໆ ແລະກາຍເປັນປ້ອມໝັ້ນອັນເຂັ້ມແຂງ ຂອງສັງຄົມນິຍົມ"(2). ປະທານໄກສອນ ພົມວິຫານ ຊຽນວ່າ: "ການຄຸ້ມຄອງທຸລະກິດໃນວິສາຫະກິດ ແລະບໍລິສັດຂອງເອກະຊົນຕ່າງໆອາດຈະບໍ່ມີບັນຫາອັນໃດພໍໃຫ້ເປັນ

(1),(2) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ, ເຫຼັ້ມ III, ປີ 1997, ໜ້າ 46-47, 92.

ຫ່ວງນອກຈາກປະຕິບັດລະບອບ, ລະບຽບການຕ່າງໆທີ່ວາງອອກນັ້ນຢ່າງເຂັ້ມງວດ ເປັນຕົ້ນລະບອບບັນຊີ-ການເງິນ, ລະບອບຂຶ້ນທະບຽນ, ກົດລະບຽບເຄື່ອນໄຫວ...ແຕ່ການຄຸ້ມຄອງການຜະລິດວິສາຫະກິດ ແລະບໍລິສັດລັດຊໍ້າພັດກົງກັນຂ້າມ; ໃນນັ້ນ, ພວມມີຫຼາຍບັນຫາໃຫຍ່ທີ່ຍັງຄົງຄ້າງເຊັ່ນ: ບັນຫາກຳມະສິດ, ສິດນຳໃຊ້, ສິດເປັນເຈົ້າຕົນເອງໃນການຄຸ້ມຄອງ ແລະໂດຍສະເພາະແມ່ນປະສິດທິຜົນຂອງທຶນ ແມ່ນຍັງຕ່ຳທີ່ສຸດ"[1]. ແລະນັບແຕ່ນີ້ເປັນຕົ້ນໄປລັດຈະບໍ່ສ້າງຕັ້ງຮາກຖານລັດວິສາຫະກິດໃນຂົງເຂດການຜະລິດທຸລະກິດທົ່ວໄປ ເມື່ອເຫັນວ່າມັນບໍ່ມີຄວາມຈຳເປັນ. ລັດຈະສົ່ງເສີມການລົງທຶນ ຂອງເອກະຊົນເປັນຕົ້ນຕໍ ຫຼືອາດຈະເຂົ້າຮ່ວມການລົງທຶນສ່ວນໃດສ່ວນໜຶ່ງ ເພື່ອຈັດຕັ້ງປະຕິບັດບໍລິສັດຮຸ້ນສ່ວນ ຫຼື ທະນາຄານຈະໃຫ້ກູ້ຢືມທຶນໃນອັດຕາດອກເບ້ຍຕ່ຳດ້ວຍເງື່ອນໄຂອັນແນ່ນອນ ຖ້າຫາກວ່າຄວນສົ່ງເສີມການລົງທຶນໃນຂົງເຂດນັ້ນຢ່າງແຂງແຮງ.

ຕະຫຼອດໄລຍະຜ່ານມາປະທານ ໄກສອນ ພົມວິຫານ ໄດ້ອຸທິດສະຕິປັນຍາ ເພື່ອຄົ້ນຄວ້າ ແລະຜັນຂະຫຍາຍທິດສະດີມາກ-ເລນິນເຂົ້າໃນການປະຕິວັດລາວ, ມາເຖິງປັດຈຸບັນແນວຄິດທິດສະດີອັນມີຄຸນ ຄ່າຍອດຍິ່ງ ຂອງເພິ່ນຍັງຄົງຖືກຕ້ອງ ແລະສອດຄ່ອງ ທັງເປັນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ຈຳເປັນທີ່ສຸດຕ້ອງໄດ້ຄົ້ນຄວ້າ, ໝູນໃຊ້ແນວຄິດ ໄກສອນ ພົມວິຫານ ເຂົ້າໃນການຄຸ້ມຄອງເສດຖະກິດຂອງລັດ ຢູ່ປະເທດເຮົາໃນປັດຈຸບັນ; ສະນັ້ນ, ການໝູນໃຊ້ແນວຄິດ ຂອງເພິ່ນຄວນເອົາໃຈໃສ່ບາງບັນຫາດັ່ງນີ້:

ໜຶ່ງ, ສືບຕໍ່ຄົ້ນຄວ້າ ແລະເສີມຂະຫຍາຍແນວຄິດ ໄກສອນ ພົມວິຫານ ກ່ຽວກັບການຄຸ້ມຄອງວິສາຫະກິດ ຂອງລັດໃຫ້ເລິກເຊິ່ງໂດຍຍຶດໝັ້ນທິດນຳ ຂອງພັກໃນການກ້າວຂຶ້ນສັງຄົມນິຍົມຢ່າງສະເໝີຕົ້ນສະເໝີປາຍບົນພື້ນຖານການກໍ່ສ້າງປັບປຸງວິສາຫະກິດ ຂອງລັດ ໃຫ້ມີຄວາມເຂັ້ມແຂງມີປະສິດທິພາບ ເປັນເຈົ້າພາທາງ ແລະເປັນແບບຢ່າງນຳໜ້າໃຫ້ກັບພາກສ່ວນເສດຖະກິດອື່ນ.

ສອງ, ປະຕິບັດກົນໄກໄລ່ລຽງເສດຖະກິດຢ່າງເຖິງຖອງ, ເດັດດ່ຽວລຶບລ້າງກົນໄກເສດຖະກິດເກື້ອກູນໃຫ້ໝົດໄປ; ສຸມໃສ່ປັບປຸງລະບຽບການ ກໍຄືກົນໄກຄຸ້ມຄອງການເຄື່ອນໄຫວຂອງລັດວິສາຫະກິດ ເພື່ອໃຫ້ມັນມີຄວາມຄ່ອງຕົວ ແລະມີປະສິດທິຜົນ. ພ້ອມກັນນັ້ນກໍຄວນຕັ້ງໜ້າ ແລະເດັດດ່ຽວແກ້ໄຂບັນດາປາກົດການຫຍໍ້ທໍ້ໃນຂົງເຂດລັດວິສາຫະກິດ. ຄວນສ້າງໃຫ້ລັດວິສາຫະກິດເປັນແບບຢ່າງໃນການປະຕິບັດພັນທະຕໍ່ລັດ ແລະສັງຄົມ, ໃນການປະຕິບັດລະບຽບ, ກົດໝາຍຕ່າງໆ, ນຳໃຊ້ເຕັກນິກ, ວິທີການຜະລິດ, ທຸລະກິດທີ່ກ້າວໜ້າທັນສະໄໝ

ສາມ, ຄວນປັບປຸງລັດວິສາຫະກິດໃຫ້ມີປະສິດທິຜົນ ແລະທັນສະໄໝດ້ວຍມາດຕະການອັນເໝາະສົມ, ລວມທັງຫັນໄປສູ່ວິສາຫະກິດປະສົມ ຫຼື ຮຸ້ນສ່ວນ, ເອົາວິສາຫະກິດທີ່ມີເງື່ອນໄຂພຽງພໍເຂົ້າຕະຫຼາດຫຼັກຊັບ; ສ່ວນໃນດ້ານໜຶ່ງອີກກໍໃຫ້ຄົ້ນຄວ້າສ້າງຕັ້ງລັດວິສາຫະກິດຂຶ້ນໃນບາງຂະແໜງການທີ່ເຫັນວ່າມີຄວາມຈຳເປັນ.

ສັງລວມແລ້ວ, ແນວຄິດ ໄກສອນ ພົມວິຫານ ກ່ຽວກັບການຄຸ້ມຄອງວິສາຫະກິດ ຂອງ

[1] ໄກສອນ ພົມວິຫານ ນິພົນເລືອກເຟັ້ນ, ເຫຼັ້ມ IV, ປີ 2005, ໜ້າ 277.



ອ່ານຕໍ່ໜ້າ 54